**Safeguarding Kids Together (SKT)**
**Fact sheet for parents and carers**




# ການປົກປ້ອງເດັກນ້ອຍຮ່ວມກັນ

## ເອກະສານຄວາມຈິງ ສໍາລັບພໍ່ແມ່ແລະຜູ້ດູແລ

### ກ່ຽວກັບການປົກປ້ອງເດັກຮ່ວມກັນ (SKT)

ໂຮງຮຽນມີຊັບພະຍາກອນຢ່າງກວ້າງຂວາງເພື່ອຊ່ວຍໃຫ້ນັກຮຽນທຸກຄົນບັນລຸຄວາມສາມາດຂອງເຂົາເຈົ້າ. SKT ມີໃຫ້ກັບທຸກໆໂຮງຮຽນຫຼວງຂອງຣັດ NSW, ໃຫ້ຄໍາແນະນໍາທີ່ຊ່ຽວຊານກັບທີ່, ການສະໜັບສະໜູນ ແລະ ໂຄງການຕ່າງໆໃນການຊ່ວຍເຫຼືອໂຮງຮຽນເພື່ອແກ້ໄຂພຶດຕິກໍາທີ່ມີຄວາມ ສ່ຽງສູງຂອງນັກຮຽນ. SKT ຊ່ວຍໃນການ:

- ສ້າງສະພາບແວດລ້ອມໃນໂຮງຮຽນໃຫ້ສົມບູນແລະທົນທານ.
- ລະບຸນັກຮຽນຜູ້ທີ່ອາດຈະມີຄວາມສ່ຽງ ແລະໃຫ້ການສະໜັບສະໜູນທີ່ເໝາະສົມ.
- ຈັດການແລະຕອບໂຕ້ຕໍ່ເຫດການສຸກເສີນ.

### ເຮັດວຽກຮ່ວມກັນເພື່ອສະໜັບສະໜູນ ຊາວໜຸ່ມ

ມີຫຼາຍປັດໄຈທີ່ສາມາດເຮັດໃຫ້ນັກຮຽນກາຍເປັນຜູ້ທີ່ມີຄວາມສ່ຽງໃນການພົວພັນກັບການມີຄວາມປະພຶດທີ່ມີຄວາມສ່ຽງສູງເຊັ່ນ: ການກັ່ນແກ້ງຂົ່ມເຫັງກັນລວມທັງການກັ່ນແກ້ງຂົ່ມເຫັງທາງອິນເຕີເນັດ; ຄວາມຮຸນແຮງທາງດ້ານຮ່າງກາຍຫຼືການຂົ່ມຂູ່ຂອງຄວາມຮຸນແຮງທາງດ້ານຮ່າງກາຍ; ທໍາຮ້າຍຕໍ່ຕົວເອງ; ນໍາໃຊ້ສານໃນທາງຜິດແລະພົວພັນກັບອົງກອນທີ່ພົວພັນກັບການກໍ່ອາຊະຍາກັມຫຼືອົງກອນທີ່ເປັນອັນຕະລາຍອື່ນໆ

- ຄຽງຄູ່ກັບໂຮງຮຽນ, ທ່ານຢູ່ໃນຖານະທີ່ບໍ່ຄືໃຜໃນການທີ່ຈະສັງເກດເຫັນການປ່ຽນແປງທີ່ສໍາຄັນໃນພຶດຕິກໍາຂອງລູກທ່ານແລະຊ່ວຍພວກເຂົາໃນການຊອກຫາການຊ່ວຍເຫຼືອ. ຖ້າທ່ານສັງເກດເຫັນການປ່ຽນແປງໃນພຶດຕິກໍາຂອງລູກທ່ານ ຫຼື ລູກຂອງທ່ານແບ່ງປັນຂໍ້ມູນກັບທ່ານທີ່ເຮັດໃຫ້ທ່ານມີຄວາມກັງວົນໃຈກ່ຽວກັບລູກຂອງທ່ານ, ແນວຄວາມຄິດຕໍ່ໄປນີ້ອາດຈະຊ່ວຍໄດ້.

ຮັບຟັງຢ່າງສະຫງົບແລະໃຫ້ໄດ້ເລື້ອງທັງໝົດ. ຊຸກຍູ້ໃຫ້ລູກຂອງທ່ານເວົ້າແລະບອກພວກເຂົາວ່າການຂໍຄວາມຊ່ວຍເຫຼືອແລະຄໍາແນະນໍາແມ່ນບໍ່ເປັນຫຍັງ.

ຖາມຄໍາຖາມເພື່ອໃຫ້ໄດ້ລາຍລະອຽດເພີ່ມເຕີມຖ້າຕ້ອງການເຊັ່ນຖາມວ່າ: ໃຜ, ແມ່ນຫຍັງ, ຢູ່ໃສ, ເວລາໃດ. ຖາມລູກທ່ານວ່າພວກເຂົາຕ້ອງການເຮັດຫຍັງ - ແລະສິ່ງທີ່ພວກເຂົາຢາກໃຫ້ທ່ານເຮັດແມ່ນຫຍັງ. ລູກຂອງທ່ານອາດຈະລັງເລໃຈທີ່ຈະເວົ້າກັບພະນັກງານໂຮງຮຽນ.

ປຶກສາຫາລືແນວຄວາມຄິດແລະເຮັດໃຫ້ເຂົາເຈົ້າໝັ້ນໃຈວ່າການສະແຫວງຫາຄວາມຊ່ວຍເຫຼືອແລະຄໍາແນະນໍາຈາກໂຮງຮຽນສາມາດຊ່ວຍໄດ້.

ແບ່ງປັນຂໍ້ມູນທີ່ກ່ຽວຂ້ອງກັບໂຮງຮຽນ. ທໍາການນັດໝາຍກັບຄູຂອງລູກທ່ານ ແລະ ຖ້າທ່ານຕ້ອງການຈິ່ງຂໍເວົ້າລົມກັບທ່ານຄູໃຫຍ່.

ເກັບບັນທຶກການປະຊຸມກັບໂຮງຮຽນແລະວິທີທີ່ທ່ານຈະເຮັດວຽກຮ່ວມກັນເພື່ອແກ້ໄຂບັນຫາ.

ການເຮັດວຽກຮ່ວມກັນກັບໂຮງຮຽນແມ່ນວິທີທີ່ດີທີ່ສຸດທີ່ຈະຊ່ວຍແກ້ໄຂບັນຫາຕ່າງໆ. ຖ້າທ່ານມີຄວາມກັງວົນຢ່າງໜັກຕໍ່ຄວາມປອດໄພຂອງລູກທ່ານ, ຈິ່ງຕິດຕໍ່ຫາຕໍາຫຼວດ.



ປັດໃຈປ້ອງກັນທີ່ມີປະສິດທິພາບສູງສຸດບາງຢ່າງໃນບັນດາຊາວໜຸ່ມ ແມ່ນການເຊື່ອມຕໍ່ແລະເປັນພາກສ່ວນຂອງຄອບຄົວ, ມິດສະຫາຍແລະໂຮງຮຽນ.

## ມີວິທີໃດແດ່ທີ່ທ່ານສາມາດຊ່ວຍເຫຼືອລູກຂອງທ່ານ?

ມີສ່ວນຮ່ວມແລະສະເໜີໂອກາດໃຫ້ລູກຂອງທ່ານແບ່ງປັນກັບທ່ານ ຂໍ້ມູນກ່ຽວກັບກິດຈະກໍາ ປະຈໍາ ວັນ, ໝູ່ເພື່ອນ ແລະ ຊີວິດໃນໂຮງຮຽນ. ອັນນີ້ຈະຊ່ວຍໃຫ້ທ່ານໄດ້ຮັບຮູ້ກ່ຽວກັບວ່າລູກຂອງທ່ານຢູ່ໃສ, ພວກເຂົາຢູ່ກັບໃຜແລະພວກເຂົາເຮັດຫຍັງຢູ່.

ຊຸກຍູ້ໃຫ້ລູກຂອງທ່ານມີສ່ວນຮ່ວມໃນກິດຈະກໍາ ທີ່ໃຫ້ຄວາມຮູ້ສຶກວ່າເຂົ້າເຈົ້າມີສ່ວນຮ່ວມເປັນເຈົ້າຂອງແລະມີບ່ອນໃດບ່ອນໜຶ່ງທີ່ເຂົາເຈົ້າສາມາດ ເລັ່ງຄວາມສົນໃຈໃສ່. ຍົກຕົວຢ່າງ, ກິລາ, ການສະແດງສິລະປະ, ວຽກອະດິເຣກຍາມຫວ່າງແລະສະໂມສອນຕ່າງໆ.

ເປັນຜູ້ຮູ້ທາງອິນເຕີເນັດແລະເຂົ້າໃຈເຖິງຄຸນປະໂຫຍດແລະຄວາມສ່ຽງທີ່ກ່ຽວຂ້ອງກັບການໃຊ້ອຸປະກອນເອເລັກໂທຣນິກຂອງລູກທ່ານເຊັ່ນ: ຄອມພິວເຕີ, ແທັບເລັດ ແລະ ສະມາດໂຟນ ແລະຊ່ວຍລູກຂອງທ່ານໃຫ້ໃຊ້ອຸປະກອນຂອງພວກເຂົາຢ່າງສະຫຼາດ.

ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບການຊ່ວຍເຫຼືອລູກຂອງທ່ານໃຫ້ມີປະສົບການທີ່ປອດໄພ ມີຄວາມມ່ວນ ຊື່ນທາງອິນເຕີເນັດ, ເຂົ້າເບິ່ງເວັບໄຊທ໌ eSafety ທີ່ esafety.gov.au/

ເປັນແບບຢ່າງໂດຍການສ້າງຄວາມສໍາພັນໃນທາງບວກແລະສະແດງໃຫ້ລູກທ່ານເຫັນໃນການຄິດຢ່າງເລິກເຊິ່ງກ່ຽວກັບຂໍ້ມູນ.

ສັງເກດການປ່ຽນແປງພຶດຕິກໍາຂອງລູກທ່ານແລະຊ່ວຍໃຫ້ພວກເຂົາຮູ້ສຶກປອດໄພທີ່ຈະແບ່ງປັນຄວາມຄິດແລະຄວາມຮູ້ສຶກຂອງພວກເຂົາກັບທ່ານ.

ຊຸກຍູ້ການສົນທະນາຢ່າງເປີດເຜີຍແລະຊື່ສັດກັບລູກຂອງທ່ານເພື່ອໃຫ້ພວກເຂົາຮຽນຮູ້ແລະເຂົ້າໃຈຄວາມຄິດຂອງຄົນອື່ນ.

ຮັບຟັງຄວາມກັງວົນຂອງລູກທ່ານແລະພະຍາຍາມເຂົ້າໃຈທັດສະນະຂອງເຂົາເຈົ້າເຖິງແມ່ນວ່າທ່ານຈະບໍ່ເຫັນດີນໍາສິ່ງທີ່ລູກທ່ານກໍາລັງເວົ້າ, ມັນເປັນສິ່ງສໍາຄັນທີ່ຈະແຈ້ງໃຫ້ພວກເຂົາຮູ້ວ່າພວກເຂົາຖືກຍອມຮັບແລະທ່ານກໍຢູ່ທີ່ນັ້ນເພື່ອຊ່ວຍພວກເຂົາ.

## ກວດເບິ່ງບາງເວັບໄຊທ໌ທີ່ມີປະໂຫຍດ

- Beyond Blue ໃຫ້ຂໍ້ມູນແລະການສະໜັບ ສະໜູນເພື່ອຊ່ວຍທຸກຄົນໃຫ້ມີສຸຂະພາບຈິດທີ່ດີທີ່ສຸດເທົ່າທີ່ເປັນໄປໄດ້ທີ່ເວັບໄຊທ໌ beyondblue.org.au
- ເວັບໄຊທ໌ ຕ້ານການຂົ່ມເຫັງ ຂອງຣັດ NSW ໃຫ້ຂໍ້ມູນແກ່ພະນັກງານ, ນັກຮຽນແລະຜູ້ປົກຄອງເພື່ອປ້ອງກັນແລະຕອບໂຕ້ຕໍ່ການຂົ່ມເຫັງຂອງນັກຮຽນທີ່ເວັບໄຊທ໌ antibullying.nsw.gov.au
- ຊັບພະຍາກອນທາງອອນລາຍນ໌ດ້ານຄວາມປອດໄພແລະຄໍາແນະນໍາທີ່ກ່ຽວຂ້ອງກັບການລ່ວງລະເມີດທາງອິນເຕີເນັດສາມາດຫາພົບໄດ້ທີ່ເວັບໄຊທ໌ eSafety Commissioner ທີ່ esafety.gov.au



## ສໍາລັບຂໍ້ມູນເພີ່ມເຕີມ

ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມກະລຸນາຕິດຕໍ່ໂຮງຮຽນທ້ອງຖິ່ນຂອງທ່ານຖ້າທ່ານຕ້ອງການນາຍພາສາຊ່ວຍໃນການສອບຖາມຂອງທ່ານ, ກະລຸນາໂທຫາ ບໍລິການ ນາຍພາສາທາງໂທລະສັບ ທີ່ນໍາເບີ 131 450 ແລະຂໍເອົານາຍພາສາເປັນພາສາຂອງທ່ານ.

ບອກເບີໂທລະສັບທີ່ທ່ານຕ້ອງການໂທຫາແລະຜູ້ຮັບສາຍຈະຫານາຍພາສາຢູ່ໃນສາຍເພື່ອຊ່ວຍທ່ານໃນການສົນທະນາ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.